**ມິຊຊາອາທິດທີ 21 ກຳນົດທຳມະດາປີ B**

**ວັນທີ 22 ສິງຫາ 2021**



**ພຣະວໍລະສານໂດຍນັກບຸນຢວງ 6, 60-69**

ໃນເວລານັ້ນ, ລູກສິດຫລາຍຄົນທີ່ໄດ້ຍິນພຣະເຢຊູເຈົ້າກ່າວໃນໂຮງທຳເມືອງກາຟານາອຸມວ່າ: "ຜູ້ໃດກິນເນື້ອຂອງເຮົາຜູ້ນັ້ນມີຊີວິດນິຣັນດອນ". ກໍພາກັນຈົ່ມວ່າ: "ຄຳເວົ້າຂອງເພິ່ນນີ້ຟັງຍາກແທ້, ໃຜຈະຮັບເອົາໄດ້?" ພຣະເຢຊູເຈົ້າຮູ້ສຶກຄຳເວົ້າຈົ່ມຂອງພວກເຂົາ ຈຶ່ງເວົ້າວ່າ: "ເລື່ອງນີ້ບາດໃຈພວກເຈົ້າບໍ? ແລະເມື່ອພວກເຈົ້າຈະເຫັນບຸດມະນຸດສະເດັດຂຶ້ນໄປ ບ່ອນພຣະອົງສະຖິດຢູ່ແຕ່ກ່ອນແລ້ວ, ພວກເຈົ້າຈະວ່າແນວໃດ? ແມ່ນຈິດທີ່ບັນດານໃຫ້ມີຊີວິດ, ເນື້ອໜັງເຮັດຫຍັງບໍ່ໄດ້ດອກ. ວາຈາທີ່ເຮົາກ່າວກັບພວກເຈົ້າຢູ່ນີ້ແມ່ນເລື່ອງຈິດແລະແມ່ນຊີວິດດ້ວຍ. ແຕ່ມີຫລາຍຄົນໃນພວກເຈົ້າບໍ່ຍອມເຊື່ອ." ຕາມຈິງແລ້ວ, ພຣະເຢຊູເຈົ້າຊົງຊາບດີແຕ່ຕົ້ນວ່າຜູ້ໃດແມ່ນຜູ້ບໍ່ເຊື່ອ ແລະຜູ້ໃດຈະເປັນຜູ້ມອບພຣະອົງ". ພຣະອົງຊົງກ່າວຕື່ມວ່າ: "ດ້ວຍເຫດນີ້ແຫລະເຮົາຈຶ່ງບອກພວກເຈົ້າໄວ້ແລ້ວວ່າ: ບໍ່ມີໃຜມາຫາເຮົາໄດ້, ຖ້າພຣະບິດາບໍ່ປະທານໃຫ້."

ຕັ້ງແຕ່ນັ້ນມາ, ລູກສິດຫລາຍຄົນຕີຕົວອອກຫ່າງ ແລະບໍ່ໄປນຳພຣະອົງ. ພຣະເຢຊູເຈົ້າຈຶ່ງກ່າວກັບພວກສາວົກສິບສອງຄົນວ່າ: "ພວກເຈົ້າກໍຢາກໜີໄປຄືກັນບໍ?" ເປໂຕຈຶ່ງທູນຕອບວ່າ: "ໂອພຣະອົງເຈົ້າ, ພວກຂ້ານ້ອຍຈະໄປຫາໃຜ? ພຣະອົງມີວາຈາທີ່ບັນດານຊີວິດນິຣັນດອນ. ສ່ວນພວກຂ້ານ້ອຍນີ້, ພວກຂ້ານ້ອຍເຊື່ອແລະຮູ້ດີວ່າ: ພຣະອົງແມ່ນພຣະກຣິສໂຕ, ພຣະບຸດຂອງພຣະເຈົ້າ".

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ:**

ວາຈາພຣະເຈົ້າຊຶ່ງພວກເຮົາໄດ້ຟັງວັນນີ້ແມ່ນຢູ່ຕອນທ້າຍຂອງການທະວີເຂົ້າໜົມປັງຫ້າກ້ອນແລະປາສອງໂຕເພື່ອລ້ຽງຝູງຊົນເປັນຈຳນວນຫລາຍ. ເມື່ອມາເຖິງຕອນທ້າຍແລ້ວ, ສິ່ງທີ່ຝູງຊົນກໍຄືພວກລູກສິດຂອງພຣະເຢຊູເຈົ້າຕ້ອງກະທຳກໍຄື: ການເລືອກ. ເລືອກທີ່ຈະເຊື່ອໃນພຣະອົງແລະຕິດຕາມພຣະອົງໄປຈົນເຖິງຕີນກາງເຂນ. ຫລືເລືອກທີ່ຈະບໍ່ເຊື່ອໃນພຣະອົງແລະປະພຣະອົງໄປ. ດັ່ງໃນບົດອ່ານທີໜຶ່ງຈາກໜັງສືຢໍຊູເອ. ເມື່ອປະຊາກອນມາເຖິງດິນສັນຍາແລ້ວ. ຢໍຊູເອກໍໃຫ້ພວກເຂົາເລືອກລະຫວ່າງເຊື່ອໃນພຣະເຈົ້າທີ່ໄດ້ປົດປ່ອຍພວກເຂົາອອກຈາກປະເທດເອຢິບ ຫລືເຊື່ອໃນພຣະເຈົ້າອື່ນ. ແລະປະຊາກອນອິສຣາແອນກໍໄດ້ປະກາດວ່າພວກເຂົາເຊື່ອໃນພຣະເຈົ້າທີ່ໄດ້ນຳພາພວກເຂົາອອກຈາກປະເທດເອຢິບ. ການປະກາດຄວາມເຊື່ອໃນພຣະເຈົ້າໜຶ່ງດຽວຂອງປະຊາກອນອິສຣາແອນແລະການເລືອກທີ່ຈະຕິດຕາມພຣະເຢຊູເຈົ້າຂອງເປໂຕໃນພຣະວໍລະສານວັນນີ້ມີຄວາມຄ້າຍຄືກັນຢູ່ບ່ອນວ່າ ເຖິງວ່າທັງສອງຈະເລືອກທີ່ຈະເຊື່ອແລະຕິດຕາມພຣະເຈົ້າໄປ, ແຕ່ພວກເຂົາກໍບໍ່ໄດ້ເຂົ້າໃຈໃນການເລືອກແລະຄວາມເຊື່ອຂອງພວກເຂົາ. ເພາະພາຍຫລັງປະຊາກອນອິສຣາແອນກໍບໍ່ໄດ້ສັດຊື່ໃນຄວາມເຊື່ອຂອງພວກເຂົາ. ດັ່ງດຽວກັບເປໂຕ, ເມື່ອພຣະເຢຊູເຈົ້າຖືກຈັບ, ເຂົາກໍໄດ້ປະຕິເສດພຣະອົງເຖິງສາມຄັ້ງ. ເຖິງຢ່າງນັ້ນກໍດີ, ພຣະເຈົ້າກໍຍັງຮັກແລະເລືອກສັນພວກເຂົາ. ແລະຍິ່ງໄປກວ່ານັ້ນ, ພຣະອົງພ້ອມທີ່ຈະໃຫ້ອະໄພແກ່ພວກເຂົາເມື່ອພວກເຂົາປະຕິເສດແລະປະຖິ້ມພຣະອົງ.

ພວກເຮົາຜູ້ເປັນສິດຂອງພຣະອົງກໍເຊັ່ນດຽວກັນ. ເຖິງວ່າພວກເຮົາໄດ້ປະກາດຢືນຢັນຄວາມເຊື່ອເມື່ອພວກເຮົາຮັບສິນລ້າງບາບແລະສິນກຳລັງກໍຕາມ. ແຕ່ຫລາຍຄັ້ງໃນຊີວິດ, ພວກເຮົາກໍບໍ່ໄດ້ສັດຊື່ຕໍ່ຄວາມເຊື່ອທີ່ພວກເຮົາໄດ້ປະກາດ. ເຖິງປານນັ້ນກໍດີ, ພຣະເຢຊູເຈົ້າກໍຍັງຮັກແລະພ້ອມທີ່ຈະໃຫ້ອະໄພແກ່ພວກເຮົາຢູ່ສະເໝີ. ຄວາມຮັກນີ້ໄດ້ສະແດງອອກຢ່າງສົມບູນຢູ່ບົນກາງເຂນ.

**ພາວະນາ**

ໂພຣະເຢຊູເຈົ້າ, ພຣະອົງຮູ້ຈັກທຸກຢ່າງ, ພຣະອົງຮູ້ວ່າລູກຮັກພຣະອົງແຕ່ບາງຄັ້ງລູກກໍປະຕິເສດພຣະອົງ. ພຣະອົງຮູ້ວ່າລູກອ່ອນແອແລະເປັນຄົນບາບ, ແຕ່ພຣະອົງກໍຍັງເລືອກສັນລູກແລະພ້ອມທີ່ຈະໃຫ້ອະໄພແກ່ລູກສະເໝີ. ໂຜດໃຫ້ລູກສຳພັດໄດ້ເຖິງຄວາມຮັກອັນຍິ່ງໃຫຍ່ທີ່ພຣະອົງມີຕໍ່ລູກ. ເພື່ອລູກຈະໄດ້ເຊື່ອໝັ້ນແລະຕິດຕາມພຣະອົງໄປຕະຫລອດຊີວິດຂອງລູກດ້ວຍເທີ້ນ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ